# ເຮຮາຟ້າລັ່ນ

ເນື້ອຮ້ອງ ແລະ ທຳນອງ ໂດຍ: ວັນພິລາ ສ.ຜາບມີໄຊຍ໌

ປະພັນ 18 - 9 - 1985

ສອຍ(ໝູ່) ເຮຮາ ເຮຮາ ຟ້າລັ່ນ
ມາຮ່ວມສ້າງສັນ ຮ່ວມກັນເຮຮາ
ສຸຮາ ນາຮີ ມີຂອງດີໆ ມາແກ້ມກັນຕໍ່ໄປ

1- ຂ້ອຍ ມັກດື່ມສຸຮາ
ນາຮີ ບໍ່ຂໍຂ້ອງກ່ຽວ
ຂໍມັກ ຮັກແຕ່ຍິງດຽວ (ຊ້ຳ)
ຮັກຄົນດຽວ ແມ່ສີພັລຍາ

ສອຍ..........

2- ເຊີນ ມາຮ່ວມເຮຮາ
ຈະພາ ຫາຍຄວາມອຸກເອົ້າ
ຂ້ອຍນີ້ ບໍ່ແມ່ນຂີ້ເມົາ (ຊ້ຳ)
ດືມເບົາໆ ຫາຍຄວາມເສົ້າໂສກາ

ສອຍ..........

3- ຂ້ອຍ ບໍ່ດື່ມສຸຮາ
ນາຮີ ກໍ່ບໍ່ຫຍຸ້ງກ່ຽວ
ຂ້ອຍມັກ ຢາກຢູ່ຄົນດຽວ ( ຊ້ຳ )
ນອນຄົນດຽວ ສຸຂສະບາຍອູຮາ

ສອຍ.........

4- ຂ້ອຍ ບໍ່ມັກນາຮີ
ຖ້າມີ ຂ້ອຍກໍບໍ່ວ່າ
ໂລກນີ້ ຍິ່ງຈະໂສພາ (ຊ້ຳ )
ຫາກມີ ສຸຮາ ນາຮີ ຄູ່ກັນໄປ.....

ຈົບ